









## ພິທີມອບໃບປະກາສະນິຍະບັດ ໃຫ້ແກ່ນັກສຶກສາຄູອາຊີວະສຶກສາ ລະດັບຊັ້ນສູງ ລຸ້ນທີ VII ປະຈຳສົກສຶກສາ 2010-2011

ວັນທີ 14 ກໍລະກົດ ປີ 2011, ເວລາ 10 : 00 ໂມງ ສູນພັດທະນາອາຊີວະສຶກສາ ໄດ້ເປີດພິທີມອບໃບປະກາສະນິຍະບັດ ໃຫ້ແກ່ນັກສຶກສາຄູອາຊີວະສຶກສາ ລະດັບຊັ້ນສູງ ປະຈຳສົກສຶກສາ 2010 - 2011 ໂດຍການເປັນກຽດເຂົ້າຮ່ວມເປັນປະທານ ຂອງທ່ານ ພູວຽງ ພູມີໄລ ຮອງຫົວໜ້າກົມອາຊີວະສຶກສາ ກະຊວງສຶກສາທິການ, ເປັນກຽດເຂົ້າຮ່ວມຈາກຕາງໜ້າຂອງບັນດາຫ້ອງການ, ກົມ ແລະ ບັນດາພະແນກ ຂອງກະຊວງສຶກສາທິການ, ,ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ, ພິທີມອບ ໃບປະກາສະນິຍະບັດໃນຄັ້ງນີ້ ມີນັກສຶກສາທີ່ຮຽນຈົບ ທັງໝົດ 53 ຄົນ ຍິງ 12 ຄົນ, ເຊິ່ງໃນສົກຮຽນນີ້ ມີນັກສຶກສາເດັ່ນ ແລະ ກຽດນິຍົມປະຈຳລຸ້ນທີ VII ມີດັ່ງນີ້: ກຽດນິຍົມອັນດັບ 2 ມີ 3 ຄົນ, ນັກສຶກສາເດັ່ນ ມີ 8 ຄົນ ພ້ອມດຽວກັນນີ້ຍັງມີບຸກຄະລາກອນດີເດັ່ນ ປະຈຳສົກສຶກສາ 2010-2011 ມີດັ່ງນີ້: ພະນັກງານດີເດັ່ນປະເພດ 1 ມີ 6 ທ່ານ, ປະເພດ 2 ມີ 8 ທ່ານ ແລະ ຄູສອນດີເດັ່ນປະເພດ 1 ມີ 5 ທ່ານ, ປະເພດ 2 ມີ 6 ທ່ານ

ໃນພິທີມອບໃບປະກາສະນິຍະບັດໃນສົກສຶກສານີ້ ທ່ານ ສຸລິຄຳກອນ ສີສຸລາດ ຫົວໜ້າສູນພັດທະນາອາຊີວະສຶກສາ ໄດ້ຂຶ້ນກ່າວຜົນສຳເລັດຂອງນັກສຶກສາລຸ້ນທີ VII ສົກສຶກສາ 2010-2011 ແລະ ເພິ່ນໄດ້ມີຄຳເຫັນ ແລະ ຄຳແນະນຳ ໃຫ້ແກ່ນັກສຶກສາຜູ້ມາຮັບໃບປະກາສະນິຍະບັດໃນສົກສຶກສານີ້ ຫຼັງຈາກທ່ານ ສຸລິຄຳກອນ ສີສຸລາດ ໄດ້ຂຶ້ນກ່າວໃຫ້ຄຳເຫັນແລ້ວ ທ່ານ ພູວຽງ ພູມີໄລ ຮອງຫົວໜ້າກົມ ອາຊີວະສຶກສາ ກະຊວງສຶກສາທິການ ກໍ່ໄດ້ຂຶ້ນກ່າວໃຫ້ຄຳເຫັນຕໍ່ຜົນສຳເລັດ ແລະ ຂໍ້ຄົງຄ້າງ ຂອງສູນພັດທະນາອາຊີວະສຶກສາ ເຊິ່ງເພິ່ນກໍ່ໄດ້ເວົ້າເຖິງຄວາມສຳຄັນຂອງການພັດທະນາບຸກຄະລາກອນ ແລະ ຄວາມສາມັກຄີຂອງພະນັກງານ ເປັນນ້ຳໜຶ່ງໃຈດຽວ ຫຼັງຈາກໃຫ້ຄຳເຫັນແລ້ວ ທ່ານ ພູວຽງ ພູມີໄລ ກໍ່ໄດ້ເປັນກຽດມອບໃບປະກາສະນິຍະບັດ ໃຫ້ແກ່ນັກສຶກສາໃນສົກສຶກສານີ້ອີກດ້ວຍ